ຂໍ້ມູນເພີ້ມເຕີມກ່ຽວກັບກິດຈະກໍາຂອງໂຄງການ
ກະລຸນາເຂົ້າເບິ່ງ ຕາມທີ່ຢູ່ເວບໄຊນີ້

**www.open-laos.eu**

## ໄລຍະເວລາຂອງໂຄງການ

15/01/2020 – 14/01/2023


**ຕິດຕໍ່ພວກເຮົາໄດ້ທີ່:**

ຫ້ອງການຄຸ້ມຄອງໂຄງການສາກົນ
-OGPI-

ມະຫາວິທະຍາໄລ ອາລີຄັນເຕ
ທໍ ເດີ ຄອນໂທຣ, ພຣານທາ ບາຈາ
03690 ອາລີຄັນເຕ, ສະເປນ

+34 965 90 9718

project.management@ua.es

www.ogpi.ua.es



OPEN is co-financed by the European Commission through the Erasmus+ Programme, under contract number 610146-EPP-1-2019-1-ES-EPPKA2-CBHE-SP. The contents of this publication reflect only the views of the authors, and the European Commission cannot be held responsible for any use which may be made of the information contained therein.


## ສະຫະພາບ ເອີຣົບ




Universitat d'Alacant
Universidad de Alicante

ມະຫາວິທະຍາໄລ ອາຣີກັນເຕ
ປະເທດສະເປນ
ຜູ້ປະສານງານໂຄງການ

ມະຫາວິທະຍາໄລ ໂບລ້ອນຢາ
ປະເທດ ອີຕາລີ

## ສ ປປ ລາວ




ມະຫາວິທະຍາໄລ
ສຸພານຸວົງ

ມະຫາວິທະຍາໄລ
ສະຫວັນນະເຂດ

ກະຊວງສຶກສາທິການ
ແລະ ກິລາ

ມະຫາວິທະຍາໄລ
ແຫ່ງຊາດລາວ

ມະຫາວິທະຍາໄລ
ວິທະຍາສາດສຸຂະພາບ

ມະຫາວິທະຍາໄລ
ຈຳປາສັກ

# OPEN

# ເປີດລະບົບການສຶກສາ ຊັ້ນສູງຂອງ ລາວ ສູ່ຍຸດທະສາດການຫັນ ເປັນສາກົນ


Co-funded by the
Erasmus+ Programme
of the European Union

## ເປັນຫຍັງຈິ່ງເປັນໂຄງການ ເປີດ "OPEN" ?

ປະຈຸບັນນີ້ ການສຶກສາຊັ້ນສູງໃນທົ່ວໂລກແມ່ນຖືກຮັບຮອງເປັນບູລິມະສິດທີ່ສຳຄັນອັນໜຶ່ງ ເພື່ອສົ່ງເສີມ ໃຫ້ມີການປະກອບສ່ວນເຂົ້າໃນການສ້າງສາພັດທະນາປະເທດຊາດ ແລະ ການເຕີບໂຕທາງດ້ານເສດຖະກິດ ໂດຍຜ່ານການຍົກລະດັບທັກສະ ແລະ ການຄົ້ນຄວ້າວິທະຍາສາດ. ໃນນີ້, ກະຊວງສຶກສາທິການ ແລະ ກິລາ ຂອງ ສປປ ລາວ ຮັບຮູ້ວ່າ ການຊຸກຍູ້ສົ່ງເສີມສະຖາບັນການສຶກສາຊັ້ນສູງຂອງ ລາວ ໃນການຫັນເປັນສາກົນ ໂດຍການເພີ່ມທະວີ "ການຮ່ວມມືທັງພາຍໃນ ແລະ ຕ່າງປະເທດ" ແມ່ນເປັນບູລິມະສິດໜຶ່ງ ເພື່ອຈຸດປະສົງ ປັບປຸງການຮຽນ-ການສອນ, ເຊິ່ງຊ່ວຍໃຫ້ການສຶກສາຊັ້ນສູງສາມາດຮັບໃຊ້ສັງຄົມໄດ້ຢ່າງມີປະສິດທິຜົນ

**ເປົ້າໝາຍລວມ ຂອງ ໂຄງການ ເປີດ (OPEN) ແມ່ນ ເພື່ອ ເພີ່ມຄຸນນະພາບດ້ານວິຊາການ ແລະ ກິດຈະກຳການຄົ້ນຄວ້າວິໄຈ ຂອງ ບັນດາມະຫາວິທະຍາໄລ ໃນ ສປປ ລາວ ຜ່ານການພັດທະນາຂີດຄວາມສາມາດການຫັນເປັນສາກົນ.**

**ໂດຍສະເພາະ, ໂຄງການ ເປີດ (OPEN) ມີຈຸດປະສົງເພື່ອ:**

1

ເພື່ອສັງລວມໂຄງສ້າງການຫັນເປັນສາກົນ, ສ້າງຂີດຄວາມສາມາດຂອງບຸກຄະລາກອນ ໃນ ສະຖາບັນການສຶກສາຊັ້ນສູງ ດ້ວຍໂຄງການຝຶກອົບຮົມເປົ້າໝາຍໃນ 5 ສະຖາບັນການສຶກສາຊັ້ນສູງ

2

ເພື່ອພ້ອມກັນປະຕິຮູບການຄຸ້ມຄອງຂອງ ກະຊວງສຶກສາທິການ ແລະ ກິລາ ແລະ ເສີມຂະຫຍາຍເຄືອຄ່າຍສາກົນໂດຍການປະຕິບັດຍຸດທະສາດໃນຂົງເຂດສຳຄັນຂອງລະບົບການສຶກສາຊັ້ນສູງຂອງລາວ

## ເຮົາຈະໄດ້ຮັບຫຍັງ ຈາກໂຄງການ ເປີດ (OPEN) ນີ້ ?

ໂຄງການເປີດ (**OPEN**) ຈະໄດ້ຮັບ ຕາມຈຸດປະສົງອັນລວມ ແລະ ອັນສະເພາະ ດັ່ງທີ່ກ່າວມາຂ້າງເທິງ ດ້ວຍການສ້າງຜົນໄດ້ຮັບທີ່ໜັກແໜ້ນດັ່ງລຸ່ມນີ້:

1

ເພີ່ມທະວີການຮ່ວມມືລະຫວ່າງສະຖາບັນ ແລະ ແລກປ່ຽນການປະຕິບັດທີ່ດີ ຜ່ານການວິເຄາະຄວາມຕ້ອງ ການສ້າງສະຖາບັນ

2

ສ້າງຄວາມເຂັ້ມແຂງການຫັນເປັນສາກົນຂອງລະບົບການສຶກສາຊັ້ນສູງ ໂດຍ ສົ່ງເສີມການປະຕິຮູບການຄຸ້ມຄອງສະຖາບັນການສຶກສາຊັ້ນສູງ. ການສ້າງແຜນຍຸດທະສາດການຫັນເປັນສາກົນ ສຳລັບສະຖາບັນການສຶກສາຊັ້ນສູງໃນ ລາວ ແລະ "ການສ້າງແຜນງານດ້ານນະໂຍບາຍເພື່ອ ນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດຍຸດທະສາດການຫັນເປັນສາກົນ"

3

ການຍົກລະດັບຄວາມສາມາດ ຂອງພະນັກງານຄຸ້ມຄອງ ແລະ ພະນັກງານບໍລິຫານ ໃນການແກ້ໄຂ ບັນຫາການຫັນເປັນສາກົນຜ່ານການຝຶກອົບຮົບໃນການປະຕິບັດຢ່າງຄົບຊຸດ

4

ການສ້າງເຄືອຄ່າຍແຫ່ງຊາດ ແລະ ສົ່ງເສີມການເຂົ້າຮ່ວມເຄືອຄ່າຍຂອງໂຄງການ ເປີດ (**OPEN**) ໃນກອງປະຊຸມການສຶກສາຊັ້ນສູງລະດັບສາກົນ

5

ເພີ່ມຄວາມຮັບຮູ້ ແລະ ຄວາມເຂົ້າໃຈໃຫ້ແກ່ບຸກຄົນທົ່ວໄປກ່ຽວກັບການຫັນເປັນສາກົນພາຍໃນສະຖາບັນການສຶກສາຊັ້ນສູງ

## ໃຜແດ່ໄດ້ຮັບຜົນປະໂຫຍດ ຈາກໂຄງການ ເປີດ (OPEN)?

- ກະຊວງສຶກສາທິການ ແລະ ກິລາ, ສະຖາບັນການສຶກສາຊັ້ນສູງໄດ້ຜົນປະໂຫຍດຈາກການສ້າງຄວາມເຂັ້ມແຂງການຫັນເປັນສາກົນຂອງລະບົບການສຶກສາຊັ້ນສູງໃນ ລາວ
- ພະນັກງານຄຸ້ມຄອງລະດັບສູງ ແລະ ຜູ້ນຳລະດັບມະຫາວິທະຍາໄລ ທີ່ເຂົ້າຮ່ວມໂຄງການຈະໄດ້ຮັບຜົນປະໂຫຍດດ້ວຍການເພີ່ມຄວາມຮັບຮູ້ກ່ຽວກັບຍຸດທະສາດ, ຮູບແບບ, ແລະ ການຮ່ວມມືສາກົນທີ່ແຕກຕ່າງກັນໃນລະດັບຊາດໃນບັນຫາການຫັນເປັນສາກົນ
- ພະນັກງານ ຫ້ອງການພົວພັນຕ່າງປະເທດ ໄດ້ຜົນປະໂຫຍດ ດ້ວຍການເພີ່ມຄວາມຮັບຮູ້ ກ່ຽວກັບທັກສະການຈັດການ ແລະ ການປະຕິບັດສາກົນທີ່ແຕກຕ່າງກັນ, ສ້າງຂີດຄວາມສາມາດຜ່ານການຝຶກອົບຮົມຕົວຈິງ
- ພະນັກງານຄູສອນ, ພະນັກງານບໍລິຫານ ແລະ ນັກສຶກສາ ຈະໄດ້ຮັບຜົນປະໂຫຍດ ດ້ວຍການເພີ່ມຈຳນວນກິດຈະກຳສາກົນຂອງສະຖາບັນການສຶກສາຊັ້ນສູງຂອງລາວ ຄືກັນກັບການເພີ່ມຮູບແບບການບໍລິການແບບໃໝ່ຂອງຫ້ອງການພົວພັນຕ່າງປະເທດ

### ເຫດການສຳຄັນ:

- ການຢ້ຽມຢາມສະຖາບັນຄູ່ຮ່ວມທີ່ສະຫະພາບເອີຣົບ ສຳລັບພະນັກງານຄຸ້ມຄອງລະດັບສູງຂອງ ລາວ
- ການຈັດກອງປະຊຸມໂຕະມົນກັບອຳນາດການປົກຄອງ ແລະ ພາກສ່ວນກ່ຽວຂ້ອງ ເພື່ອປຶກສາຫາລືເຖິງຄວາມສຳຄັນຂອງການຈັດກິດຈະກຳການຫັນເປັນສາກົນໃຫ້ໄດ້ 2 ຄັ້ງ.
- ພັດທະນາຊຸດເອກະສານຝຶກອົບຮົມໃຫ້ໄດ້ 6 ສະບັບ ແລະ ຈັດກອງປະຊຸມສຳມະນາໃນທາງປະຕິບັດແບບຈຳລອງໃຫ້ສຳເລັດໄດ້ 10 ຄັ້ງ ແລະ ພ້ອມທີ່ຈະຈັດຕັ້ງປະຕິບັດ ໂດຍສະຖາບັນການສຶກສາຊັ້ນສູງທີ່ບໍ່ແມ່ນຄູ່ຮ່ວມໃນ ລາວ
- ຈັດກອງປະຊຸມການຫັນເປັນສາກົນຂອງການສຶກສາຊັ້ນສູງໃນລາວເພື່ອຊຸກຍູ້ຄວາມຊັດເຈນຂອງເຄືອຄ່າຍລະດັບຊາດ, ເຜີຍແຜ່ຂໍ້ມູນຜົນໄດ້ຮັບຂອງໂຄງການ ແລະ ສົ່ງເສີມຫ້ອງການພົວພັນຕ່າງປະເທດທີ່ຖືກສ້າງຂຶ້ນ ໃຫ້ໄດ້ 2 ຄັ້ງ.
- ການເຂົ້າຮ່ວມກອງປະຊຸມລະດັບສາກົນໃຫ້ໄດ້ 3 ຄັ້ງ ເພື່ອເຜີຍແຜ່ເຄືອຄ່າຍໃນລະດັບສາກົນ ແລະ ເພີ່ມທະວີການຮ່ວມມືລະຫວ່າງສະຫະພາບເອີຣົບ ແລະ ສະຖາບັນການສຶກສາຊັ້ນສູງສາກົນ ກັບບັນດາມະຫາວິທະຍາໄລ ຂອງ ລາວ